# ປະກາດຮັບສະໝັກອະນາໄມ ສັນຍາຈ້າງ

**ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສຳນັກງານໃຫຍ່** ມີຄວາມຕ້ອງການຮັບພະນັກງານອະນາໄມ (ສັນຍາຈ້າງ) **ຈຳນວນ 01 ຄົນ.**

❖ **ເງື່ອນໄຂຜູ້ສະໝັກ:**

- ✓ ເພດ: ຍິງ ຫຼື ຊາຍ ອາຍຸແຕ່ 25 - 35 ປີ.
- ✓ ຈົບມັດທະຍົມຕົ້ນຂຶ້ນໄປ
- ✓ ເປັນຄົນທ້ອງຖິ່ນນະຄອນຫຼວງວຽງຈັນ ຫຼື ອາໄສຢູ່ນະຄອນຫຼວງວຽງຈັນ.
- ✓ ບໍ່ເຄີຍຕ້ອງໂທດ ຄະດີອາຍາ ຫຼື ອາດສະຍາກຳອື່ນໆ, ຕິດຄຸກ ຫຼື ກ່ຽວຂ້ອງກັບສິ່ງຜິດລະບຽບກົດໝາຍ,
- ✓ ສາມາດເຮັດວຽກນອກໂມງການໄດ້.
- ✓ ມີປະສົບການດ້ານວຽກງານ ອະນາໄມ ມາກ່ອນຍິ່ງເປັນການດີ.

❖ **ຄຸນລັກສະນະຜູ້ສະໝັກ:**

- ✓ ມີສຸຂະພາບແຂງແຮງ ແລະ ສາມາດຍົກເຄື່ອງໜັກໄດ້.
- ✓ ມີຄວາມອົດທົນ ແລະ ຊື່ສັດຕໍ່ໜ້າທີ່ວຽກງານ.
- ✓ ມີມະນຸດສຳພັນດີ, ໃຈຮັກໃນການບໍລິການ.
- ✓ ບໍ່ເລືອກວຽກ, ຫ້າວຫັນ, ດຸໝັ່ນ ແລະ ມີຄວາມສາມັກຄີດີ.
- ✓ ລະອຽດຮອບຄອບ, ມີຄວາມຮັບຜິດຊອບສູງ ແລະ ກົງຕໍ່ເວລາ.

❖ **ພື້ນຕອບແທນ ແລະ ນະໂຍບາຍຕ່າງໆ:**

- ✓ ໄດ້ຮັບເງິນເດືອນຕາມລະບຽບກົດໝາຍແຮງງານຂັ້ນຕົ້ນ.
- ✓ ເງິນແຮງງານ ແລະ ເງິນນະໂຍບາຍອື່ນໆ ຕາມລະບຽບຂອງ ທຄຕລ.
- ✓ ເປັນພະນັກງານສັນຍາຈ້າງ ປີ ຕໍ່ ປີ.

❖ **ຂອບເຂດ ແລະ ໜ້າທີ່ຮັບຜິດຊອບ:**

- ✓ ຮັບຜິດຊອບອະນາໄມ ຕຶກອາຄານ, ຫ້ອງການ, ຫ້ອງປະຊຸມ ພາຍນອກ ແລະ ພາຍໃນບໍລິເວນ ທຄຕລ ສຳນັກງານໃຫຍ່ ຕາມທີ່ໄດ້ຮັບມອບໝາຍ ໃຫ້ມີຄວາມສະອາດງາມຕາ.
- ✓ ທຳຄວາມສະອາດບັນດາເຄື່ອງຈັກ, ເຄື່ອງໃຊ້, ໂຕະ, ຕັ່ງ, ຫ້ອງນ້ຳ ແລະ ອື່ນໆ ເປັນປະຈຳ.
- ✓ ກະກຽມຫ້ອງປະຊຸມ ແລະ ພິທີຕ່າງໆເປັນບາງຄັ້ງຄາວ.
- ✓ ວຽກງານອື່ນໆ ທີ່ໄດ້ຮັບມອບໝາຍ.

❖ **ວິທີສະໝັກວຽກ:**

1. **ເປີດຂາຍ-ຮັບຟອມສະໝັກ ໃນລະຫວ່າງວັນທີ 15/05/2017-30/06/2017.**
2. ສາມາດດາວໂຫຼດຟອມສະໝັກວຽກໄດ້ທີ່ເວັບໄຊສ໌ ຂອງ ທຄຕລ www.bcel.com.la ເຂົ້າໄປທີ່ສະໝັກງານ> ດາວໂຫຼດຟອມສະໝັກວຽກ ຫຼື ພົວພັນເອົາຟອມສະໝັກງານດ້ວຍຕົນເອງໄດ້ທີ່ພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່ (ແຄມຂອງ) ຕຶກ C ຊັ້ນ 04 ຫຼື ໂທສອບຖາມຂໍ້ມູນໄດ້ທີ່ **021 213200 ຕໍ່ 417 ຫຼື 418** (ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ).
3. ໃຫ້ນຳເອົາບັດປະຊາຊົນ ຫຼື ສຳມະໂນຄົວ ສະບັບຕົ້ນ ມານຳໃນເວລາທີ່ມາພົວພັນເອົາແບບຟອມສະໝັກວຽກ.
4. **ຜູ້ທີ່ຜ່ານການຄັດຟອມໃນເບື້ອງຕົ້ນ ທາງ ທຄຕລ ຈະໂທຕິດຕໍ່ກັບ.**

**ນະຄອນຫຼວງວຽງຈັນ, ວັນທີ 09/05/2017**

**ຮ.ຫົວໜ້າພະແນກຈັດຕັ້ງ-ພະນັກງານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພະແນກ ຈັດຕັ້ງແລະພະນັກງານ

ນ.ບົວໄພວັນ ມົນດາວົງ